**ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຄະນະປ້ອງກັນພາຍໃນ ເລກທີ.3233./ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 ກໍລະກົດ 2024

## ແຈ້ງການ

**ຮຽນ:** ທ່ານຫົວໜ້າກົມ, ສະຖາບັນ, ສູນ ແລະ ອົງການ ພາຍໃນ ກະຊວງ ຕສ.

- ທ່ານ ຜູ້ອຳນວຍການບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ.
- ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ອີທີແອວ ຈຳກັດ.
- ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ໄປສະນີລາວ ຈຳກັດ.
- ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ດາວທຽມລາວ ເອເຊຍ-ປາຊີຟິກ ຈຳກັດ.

ທີ່ນັບຖື.

**ເລື່ອງ:** ເພີ່ມທະວີເອົາໃຈໃສໃນການຊີ້ນຳ-ນຳພາ ແລະ ຊຸກຍູ້ວຽກງານປ້ອງກັນເວນຍາມ, ຈັດຕັ້ງໜ່ວຍປະຈຳການ ເພື່ອກຳແໜ້ນສະພາບພາຍໃນ ພ້ອມທັງກວດກາ, ຕິດຕາມວຽກງານປ້ອງກັນເວນຍາມ ຢູ່ສຳນັກງານ-ອົງການ ອ້ອມຂ້າງສູນກາງ ໃນໄລຍະການກະກຽມ ແລະ ດຳເນີນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປ ລາວເຮົາ ໄດ້ຮັບກຽດເປັນເຈົ້າພາບ ແລະ ວັນສຳຄັນຕ່າງໆ ຂອງຊາດ ທີ່ຈະມາເຖິງໃນມໍ່ໆນີ້.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະປ້ອງກັນພາຍໃນ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 2045/ກຕສ, ລົງວັນທີ 30 ພຶດສະພາ 2022.
- ອີງຕາມ ໜັງສືແຈ້ງການ ຂອງກະຊວງປ້ອງກັນຄວາມສະຫງົບ ກົມໃຫຍ່ສັນຕິບານ (502) ສະບັບເລກທີ 502/ກພນ, ລົງວັນທີ 03 ກໍລະກົດ 2024.

ຫ້ອງການກະຊວງເຕັກໂນໂລຊີ ແລະ ການສື່ສານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ໃຫ້ເພີ່ມທະວີເອົາໃຈໃສໃນການຊີ້ນຳ-ນຳພາ ແລະ ຊຸກຍູ້ວຽກງານປ້ອງກັນເວນຍາມ, ຈັດຕັ້ງໜ່ວຍປະຈຳການ ເພື່ອກຳແໜ້ນສະພາບພາຍໃນ ພ້ອມທັງກວດກາ, ຕິດຕາມວຽກງານປ້ອງກັນເວນຍາມ ຢູ່ສຳນັກງານ-ອົງການ ອ້ອມຂ້າງສູນກາງ ໃນໄລຍະການກະກຽມ ແລະ ດຳເນີນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປ ລາວເຮົາ ໄດ້ຮັບກຽດເປັນເຈົ້າພາບ ລາຍລະອຽດດັ່ງລຸ່ມນີ້:

1. ຈັດຕັ້ງໜ່ວຍປະຈຳການ ຂອງຕົນຂຶ້ນ ໂດຍແມ່ນ ຄະນະປ້ອງກັນພາຍໃນສຳນັກງານ-ອົງການນັ້ນໆ ເປັນເຈົ້າການນຳພາ ຈັດຕັ້ງປະຕິບັດ ແລະ ທັງຊີ້ນຳໜ່ວຍປ້ອງກັນຕົວ ໃຫ້ເອົາໃຈໃສເຮັດວຽກງານປ້ອງກັນເວນຍາມຢ່າງເຂັ້ມງວດ ຕະຫຼອດ 24 ຊົ່ວໂມງ;.
2. ໃຫ້ເອົາໃຈໃສ່ປັບປຸງກວດກາ ແລະ ການປ້ອງກັນເວນຍາມ, ກຳແໜ້ນສະພາບຢູ່ພາຍໃນ ໂດຍສະເພາະ ຢູ່ພາຍໃນຖັນແຖວພະນັກງານ-ສະມາຊິກພັກ, ຕິດຕາມ, ກວດກາ ຄົນເຂົ້າ-ອອກ ສຳນັກງານ-ອົງການ ຢ່າງລະອຽດເຂັ້ມງວດ ຮັບປະກັນໄດ້ຄວາມສະຫງົບປອດໄພຮອບດ້ານ ເດັດຂາດບໍ່ໃຫ້ມີປະກົດການບໍ່ດີ ເກີດຂຶ້ນ;

3. ເອົາໃຈໃສ່ກວດກາ ແລະ ປັບປຸງຄືນລະບົບຮັກສາຄວາມປອດໄພ, ສະພາບເຄື່ອງມືເຕັກນິກຕ່າງໆ ໂດຍສະເພາະ ອາວຸດຍຸດໂທປະກອນ ທີ່ຮັກສາໄວ້ໃນສາງ, ບັ້ງດັບເພີງ, ກ້ອງວົງຈອນປິດ ແລະ ອຸປະກອນເຄື່ອງມືເຕັກນິກອື່ນໆ ທີ່ຈຳເປັນ ເພື່ອຮັບປະກັນດ້ານເຕັກນິກ ແລະ ຄຸນນະພາບໃນການໃຊ້ງານຕົວຈິງ;
4. ເຂັ້ມງວດລະບົບສ່ອງແສງລາຍງານສະພາບປະຈຳວັນ ໃຫ້ຄະນະພັກ-ຄະນະນຳຂັ້ນເທິງ ເປັນປົກກະຕິ;
5. ສຳນັກງານ-ອົງການໃດ ຫາກຈັດຕັ້ງໜ່ວຍປ້ອງກັນເວນຍາມ ຂອງຕົນຂຶ້ນແລ້ວ ຮີບຮ້ອນສົ່ງຕາຕະລາງໜ່ວຍປະຈຳການ ຂອງຕົນ ພ້ອມທັງລາຍຊື່ ແລະ ເບີໂທແຕ່ລະທ່ານ ໃຫ້ຂັ້ນເທິງຂອງຕົນ ຕາມສາຍຕັ້ງ ແລະ ກົມກອງວິຊາສະເພາະປ້ອງກັນຄວາມສະຫງົບ ທີ່ຮັບຜິດຊອບວຽກງານປ້ອງກັນພາຍໃນ ເພື່ອຊາບ ໃນເວລາອັນຄວນ;
6. ຖ້າມີເງື່ອນໄຂ ສະເໜີໃຫ້ຄະນະປ້ອງກັນພາຍໃນ ສຳນັກງານ-ອົງການ ອອ້ມຂ້າງສູນກາງ ແລະ ທ້ອງຖິ່ນຂຶ້ນແຜນປະສານສົມທົບ ກັບ ກົມກອງວິຊາສະເພາະປ້ອງກັນຄວາມສະຫງົບ ທີ່ຮັບຜິດຊອບວຽກງານປ້ອງກັນພາຍໃນ ລົງຕິດຕາມ-ກວດກາ ຈັດຕັ້ງປະຕິບັດໜ້າທີ່ປ້ອງກັນເວນຍາມ ໃນຂົງເຂດທີ່ຂຶ້ນກັບຕົນຮັບຜິດຊອບ;
7. ໃນກໍລະນີ ມີສະພາບບໍ່ດີເກີດຂຶ້ນ ຕ້ອງຮີບດ່ວນລາຍງານ ຄະນະພັກ-ຄະນະນຳ ແລະ ຄະນະປ້ອງກັນພາຍໃນຂອງຕົນ ຕາມສາຍຕັ້ງ ແລະ ພ້ອມທັງປະສານກັບໜ່ວຍປະຈຳການ ຂອງກົມວິຊາສະເພາະປ້ອງກັນຄວາມສະຫງົບ ທີ່ຮັບຜິດຊອບວຽກງານປ້ອງກັນພາຍໃນ ຫຼື ລາຍງານຕໍ່ຄະນະພັກ-ຄະນະນຳ ຂອງກົມວິຊາສະເພາະປ້ອງກັນຄວາມສະຫງົບ ໂດຍກົງ ເພື່ອຄົ້ນຄວ້າພິຈາລະນາ ແລະ ແກ້ໄຂໃຫ້ທັນກັບເວລາ, ຈາກນັ້ນ ຈຶ່ງເຮັດບົດລາຍງານ ເປັນລາຍລັກອັກສອນ ໃຫ້ຂັ້ນເທິງກ່ຽວຂ້ອງຮັບຊາບຕາມພາຍຫຼັງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ຫົວໜ້າຫ້ອງການ,
ຮອງຫົວໜ້າຄະນະປ້ອງກັນພາຍໃນ

ພູຂົງ ຈິດຮູບໂລກ

ຕິດຕໍ່ພົວພັນ
ທ. ຄຳພາ ຈັນທະແກ້ວ 020 5588 5656

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ
ກົມໃຫຍ່ສັນຕິບານ (502)
ກົມປ້ອງກັນພາຍໃນ (200)

ເລກທີ:...502.../ກພນ

ນະຄອນຫຼວງວຽງຈັນ, ວັນທີ: 03 [illegible] 2024.

# ໜັງສືແຈ້ງການ

**ຮຽນ:** ຄະນະປ້ອງກັນພາຍໃນ ບັນດາສຳນັກງານ-ອົງການ, ຫ້ອງສັນຕິບານ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ແລະ ແຂວງໃກ້ຄຽງ ທີ່ນັບຖື.

**ເລື່ອງ:** ເພີ່ມທະວີຄວາມເອົາໃຈໃສ່ໃນການຊີ້ນຳ-ນຳພາ ແລະ ຊຸກຍູ້ວຽກງານປ້ອງກັນເວນຍາມ, ຈັດຕັ້ງໜ່ວຍປະຈຳການ ເພື່ອກຳແໜ້ນສະພາບການພາຍໃນ ພ້ອມທັງກວດກາ, ຕິດຕາມວຽກງານປ້ອງກັນເວນຍາມ ຢູ່ສຳນັກງານ-ອົງການ ອ້ອມຂ້າງສູນກາງ ແລະ ແຂວງໃກ້ຄຽງ ໃນໄລຍະການກະກຽມ ແລະ ດຳເນີນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປ ລາວເຮົາ ໄດ້ຮັບກຽດເປັນເຈົ້າພາບ ແລະ ວັນສຳຄັນຕ່າງໆຂອງພັກ-ລັດ ແລະ ຂອງຊາດ ທີ່ຈະມາເຖິງໃນມໍ່ໆນີ້.

- ອີງຕາມ ມະຕິ ຂອງກົມການເມືອງສູນກາງພັກ ວ່າດ້ວຍເພີ່ມທະວີວຽກງານປ້ອງກັນຄວາມສະຫງົບ ໃນສະພາບການໃໝ່ ສະບັບເລກທີ 111/ກມສພ, ລົງວັນທີ 22 ພຶດສະພາ 2020;
- ອີງຕາມ ຄຳສັ່ງ ວ່າດ້ວຍການທຸ້ມກຳລັງເຂົ້າປ້ອງກັນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44, 45 ສະບັບເລກທີ 19/ປກສ, ລົງວັນທີ 22 ມີນາ ປີ 2024 ທີ່ ສປປ ລາວເຮົາ ໄດ້ຮັບກຽດເປັນເຈົ້າພາບ;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປ້ອງກັນພາຍໃນ ສະບັບເລກທີ 559/ປກສ, ລົງວັນທີ 30 ມິຖຸນາ 2008;
- ອີງຕາມ ໜັງສືແຈ້ງການ ຂອງກົມໃຫຍ່ສັນຕິບານ ສະບັບເລກທີ 932/502, ລົງວັນທີ 29 ມີນາ 2023 ແລະ ສະພາບຄວາມຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານວິຊາສະເພາະ ໃນສະເພາະໜ້າ ກໍຄືຍາວນານ.

ເພື່ອຈັດຕັ້ງຜັນຂະຫຍາຍຕາມທິດຊີ້ນຳ ຂອງຂັ້ນເທິງ ໃຫ້ແທດເໝາະ ແລະ ລົງເລິກເຂົ້າສູ່ວຽກງານຕົວຈິງ ໂດຍໃຫ້ຕິດພັນກັບວຽກງານວິຊາສະເພາະ, ທັງຮັບປະກັນໄດ້ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພຮອບດ້ານຢູ່ບັນດາສຳນັກງານ-ອົງການອ້ອມຂ້າງສູນກາງ ແລະ ແຂວງໃກ້ຄຽງ ໂດຍພື້ນຖານ ພ້ອມທັງຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມຫຼັກການ, ວິທີການ, ຂັ້ນຕອນວິຊາສະເພາະ ເພື່ອເປັນເສນາທິການດ້ານວຽກງານວິຊາສະເພາະປ້ອງກັນຄວາມສະຫງົບການເມືອງພາຍໃນ ໃຫ້ແກ່ພັກ-ລັດຂັ້ນຕ່າງໆ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ບັນລຸຕາມຈຸດປະສົງ ແລະ ຄາດໝາຍ ທີ່ກຳນົດໄວ້, ກົມປ້ອງກັນພາຍໃນ ກົມໃຫຍ່ສັນຕິບານ

ກະຊວງປ້ອງກັນຄວາມສະຫງົບ ຂໍຖືເປັນກຽດແຈ້ງມາຍັງ ຄະນະປ້ອງກັນພາຍໃນ ບັນດາສຳນັກງານ-ອົງການ, ຫ້ອງສັນຕິບານ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ແລະ ແຂວງໃກ້ຄຽງ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນການຊີ້ນຳ ແລະ ຊຸກຍູ້ວິຊາສະເພາະປ້ອງກັນພາຍໃນ ໂດຍສະເພາະ ໃນໄລຍະການກະກຽມ ແລະ ດຳເນີນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44, 45 ທີ່ ສປປ ລາວເຮົາ ຈະໄດ້ຮັບກຽດເປັນເຈົ້າພາບ ແລະ ວັນສຳຄັນຕ່າງໆຂອງພັກ-ລັດ ແລະ ຂອງຊາດ ທີ່ຈະມາເຖິງໃນມໍ່ໆນີ້ ລະອຽດມີເນື້ອໃນດັ່ງລຸ່ມນີ້:

1. ຈັດຕັ້ງໜ່ວຍປະຈຳການ ຂອງຕົນຂຶ້ນ ໂດຍແມ່ນ ຄະນະປ້ອງກັນພາຍໃນສຳນັກງານ-ອົງການນັ້ນໆ ເປັນເຈົ້າການນຳພາຈັດຕັ້ງປະຕິບັດ ແລະ ທັງຊີ້ນຳໜ່ວຍປ້ອງກັນຕົວ ໃຫ້ເອົາໃຈໃສ່ເຮັດວຽກງານປ້ອງກັນເວນຍາມຢ່າງເຂັ້ມງວດ ຕະຫຼອດ 24 ຊົ່ວໂມງ;

2. ໃຫ້ເອົາໃຈໃສ່ປັບປຸງກວດກາ ແລະ ການປ້ອງກັນເວນຍາມ, ກຳແໜ້ນສະພາບຢູ່ພາຍໃນ ໂດຍສະເພາະ ຢູ່ໃນຖັນແຖວພະ ນັກງານ-ສະມາຊິກພັກ, ຕິດຕາມ-ກວດກາ ຄົນເຂົ້າ-ອອກ ສຳນັກງານ-ອົງການ ຢ່າງລະອຽດເຂັ້ມງວດ ເພື່ອຮັບປະກັນໄດ້ຄວາມສະຫງົບປອດໄພຮອບດ້ານ ເດັດຂາດບໍ່ໃຫ້ມີປະກົດການບໍ່ດີ ເກີດຂຶ້ນ;

3. ເອົາໃຈໃສ່ກວດກາ ແລະ ປັບປຸງຄືນລະບົບຮັກສາຄວາມປອດໄພ, ສະພາບເຄື່ອງມືເຕັກນິກຕ່າງໆ ໂດຍສະເພາະ ອາວຸດຍຸດໂທປະກອນ ທີ່ເກັບຮັກສາໄວ້ໃນສາງ, ບັ້ງດັບເພີງ, ກ້ອງວົງຈອນປິດ ແລະ ອຸປະກອນເຄື່ອງມືເຕັກນິກອື່ນໆ ທີ່ຈຳເປັນ ເພື່ອຮັບປະກັນດ້ານເຕັກນິກ ແລະ ຄຸນນະພາບໃນການໃຊ້ງານຕົວຈິງ;

4. ເຂັ້ມງວດລະບົບສ່ອງແສງລາຍງານສະພາບປະຈຳວັນ ໃຫ້ຄະນະພັກ-ຄະນະນຳຂັ້ນເທິງ ເປັນປົກກະຕິ;

5. ສຳນັກງານ-ອົງການໃດ ຫາກຈັດຕັ້ງໜ່ວຍປ້ອງກັນເວນຍາມ ຂອງຕົນຂຶ້ນແລ້ວ ຮີບຮ້ອນສົ່ງຕາຕະລາງໜ່ວຍປະຈຳການຂອງຕົນ ພ້ອມທັງລາຍຊື່ ແລະ ເບີໂທລະສັບແຕ່ລະທ່ານ ໃຫ້ຂັ້ນເທິງຂອງຕົນ ຕາມສາຍຕັ້ງ ແລະ ກົມກອງວິຊາສະເພາະປ້ອງກັນຄວາມສະຫງົບ ທີ່ຮັບຜິດຊອບວຽກງານປ້ອງກັນພາຍໃນ ເພື່ອຊາບ ໃນເວລາອັນຄວນ;

6. ຖ້າມີເງື່ອນໄຂ ສະເໜີໃຫ້ ຄະນະປ້ອງກັນພາຍໃນ ສຳນັກງານ-ອົງການ ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ຂຶ້ນແຜນປະສານສົມທົບ ກັບ ກົມກອງວິຊາສະເພາະປ້ອງກັນຄວາມສະຫງົບ ທີ່ຮັບຜິດຊອບວຽກງານປ້ອງກັນພາຍໃນ ລົງຕິດຕາມ-ກວດກາການຈັດຕັ້ງປະຕິບັດໜ້າທີ່ປ້ອງກັນເວນຍາມ ໃນຂົງເຂດທີ່ຂຶ້ນກັບຕົນຮັບ ຜິດຊອບ;

7. ໃນກໍລະນີມີສະພາບບໍ່ດີເກີດຂຶ້ນ ຕ້ອງຮີບດ່ວນລາຍງານຄະນະພັກ-ຄະນະນຳ ແລະ ຄະນະປ້ອງກັນພາຍໃນຂອງຕົນ ຕາມສາຍຕັ້ງ ແລະ ພ້ອມທັງປະສານກັບໜ່ວຍປະຈຳການ ຂອງກົມກອງວິຊາສະເພາະປ້ອງກັນຄວາມສະຫງົບທີ່ຮັບຜິດຊອບວຽກງານປ້ອງກັນພາຍໃນ ຫຼື ລາຍງານຕໍ່ຄະນະພັກ-ຄະນະນຳ ຂອງກົມກອງວິຊາສະເພາະປ້ອງກັນຄວາມສະຫງົບ ໂດຍກົງ ເພື່ອຄົ້ນຄວ້າພິຈາລະນາ ແລະ ແກ້ໄຂໃຫ້ທັນກັບເວລາ, ຈາກນັ້ນ ຈຶ່ງລາຍງານເປັນລາຍລັກອັກສອນໃຫ້ຂັ້ນເທິງກ່ຽວຂ້ອງຮັບຊາບ ຕາມພາຍຫຼັງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມປ້ອງກັນພາຍໃນ**

ກົມໃຫຍ່ 502
ກົມ 200

ພົອ. ສຸວັນ ທອງຈະເລີນ